**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ເລກທີ 344/ຈຂ.ອປ

ອັດຕະປື, ວັນທີ 06 ເມສາ 2017

# ມະຕິ

## ກອງປະຊຸມອົງການປົກຄອງແຂວງ ປະຈໍາເດືອນ 3 ປີ 2017

ກອງປະຊຸມອົງການປົກຄອງແຂວງ ປະຈໍາ ເດືອນ 3 ປີ 2017 ໄດ້ດໍາເນີນເປັນເວລາ 1 ວັນເຄິ່ງ (ວັນທີ 4-5 ເມສາ 2017) ທີ່ຫ້ອງປະຊຸມສໍານັກງານອົງການປົກຄອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ນາມ ວິຍະເກດ ກໍາມະການສູນກາງພັກ, ເລຂາພັກແຂວງ-ເຈົ້າແຂວງອັດຕະປື ແລະ ມີບັນດາທ່ານຮອງເຈົ້າແຂວງ, ຫົວໜ້າ-ຮອງພະແນກການ, ຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ, ເຈົ້າເມືອງ 5 ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມທັງໝົດ 51 ຄົນ, ຍິງ 7 ຄົນ.

ຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື ແລະ ປະກອບຄໍາຄິດຄໍາເຫັນເປັນເອກະພາບກັນຕໍ່ເນື້ອໃນບົດສະຫຼຸບລາຍງານການຈັດຕັ້ງປະຕິບັດ 3 ເດືອນຜ່ານມາ (1-2-3 ປີ 2017) ຂອງພາກສ່ວນຕ່າງໆ ຄື: ບົດສະຫຼຸບລາຍງານກ່ຽວກັບຂໍ້ມູນການລົງໂຄສະນາເຜີຍການລົງວັດແທກທີ່ດິນ, ການອອກໃບຕາດິນໃຫ້ແກ່ປະຊາຊົນ; ສະຫຼຸບການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ 3 ເດືອນຜ່ານມາ; ກົນໄກ ແລະ ມາດຕະການ ເພື່ອດໍາເນີນວຽກຄຸ້ມຄອງມາດຕະຖານຜະລິດຕະພັນຕ່າງໆ ເປັນຕົ້ນ (ກົງເຕີໄຟຟ້າ, ນໍ້າປະປາ, ນໍ້າມັນ ແລະ ກອກຕາຊັ່ງຊັ່ງໃນຕະຫຼາດ); ສະພາບຊາຍແດນ; ສະພາບການສະກັດກັ້ນ ແລະ ແກ້ໄຂບັນຫາສານເສບຕິດພາຍໃນແຂວງ, ສະພາບການປັບປຸງກົງຈັກ ແລະ ການມອບໂອນບັນດາອົງການໃຫ້ພະແນກການທີ່ຂັ້ນເທິງຕົກລົງແລ້ວ; ສະພາບຄວາມບໍ່ສະຫງົບຕ່າງໆ; ສະພາບການສ້າງມູນນິທິ ຊ່ວຍເຫຼືອຄົນອານາຖາ ແລະ ເສຍຊີວິດ; ວຽກງານກອງທຶນປະກັນສຸຂະພາບແຫ່ງຊາດ (ກປຊ); ກົນໄກການຄຸ້ມຄອງ, ວຽກງານຍຸຕິທໍາຢູ່ຂັ້ນຮາກຖານ, ປະສານງານລະຫວ່າງລັດ ແລະ ຂົງເຂດຕຸລາການ; ຄວາມຄືບໜ້າໃນການປະມູນຂາຍໄມ້ຢຶດໄມ້, ໄມ້ທ້ອນໂຮມຕ່າງໆ; ການກວດກາ ແລະ ຄຸ້ມຄອງໄມ້ສະໜາມ II ; ແຜນກິດຈະກໍາທີ່ຈະສະຫຼອງປີໃໝ່.

ຜ່ານການຄົ້ນຄວ້າປຶກສາຫາລື ແລະ ການປະກອບຄວາມຄິດຄວາມເຫັນ ຢ່າງກົງໄປກົງມາ, ຈຶ່ງໄດ້ຕົກລົງເປັນເອກະພາບກັນ ເພື່ອສືບຕໍ່ແກ້ໄຂ ແລະ ຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ກ່ຽວກັບວຽກງານທີ່ກ່າວມາຂ້າງເທິງ ກອງປະຊຸມໄດ້ພິຈາລະນາ ແລະ ຕົກລົງຮັບຮອງເອົາຜົນຂອງການປຶກສາຫາລືດັ່ງນີ້:

I. ກອງປະຊຸມພິຈາລະນາ ແລະ ຕົກລົງຮັບຮອງເອົາຜົນຂອງການປຶກສາຫາລື ດັ່ງນີ້:

1. ແຜນສູ້ຊົນກ່ຽວກັບການຂຶ້ນສຳມະໂນທີ່ດິນ ປະຕິບັດໃຫ້ໄດ້ຈຳນວນ 12.000 ຕອນ, ອອກໃບຕາດິນຖາວອນໃຫ້ໄດ້ 4.000 ຕອນ; ໃນນີ້: ເມືອງສາມັກຄີໄຊ 28 ບ້ານ ແລະ ເມືອງພູວົງ 15 ບ້ານຈະຮັບຮອງໃຫ້ສຳເລັດ (ຜູ້ທີ່ລົງໄປເຮັດວຽກແມ່ນໃຫ້ປະຈຳຢູ່ແຕ່ລະບ້ານສຳເລັດແລ້ວຈຶ່ງຂຶ້ນມາ).

- ມອບໃຫ້ຄະນະໂຄສະນາອົບຮົມແຂວງສົມທົບກັບພະແນກ ຊສ ແຂວງ ຈັດຕັ້ງການສຳມະນາກ່ຽວກັບກົດໝາຍ ແລະ ນະໂຍບາຍທີ່ດິນໃຫ້ສຳເລັດໃນເດືອນ 4/2017.

2. ຮັບຮອງເອົາທິດຊີ້ນຳຕົກລົງຂອງຄະນະປະຈຳພັກແຂວງ ເພື່ອມາຈັດຕັ້ງຜັນຂະຫຍາຍ ຄື: ວາລະໃຫຍ່ຂອງແຂວງກ່ຽວກັບການພັດທະນາແລະແກ້ໄຂຕາມບໍລິເວນພາຍໃນ ໂດຍມອບໃຫ້ກອງບັນຊາການ ປກຊ ແຂວງ ເປັນຜູ້ກຳນົດຈຸດທີ່ຕັ້ງກ້ານຖູ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງໄປປະຈຳການແລະເຄື່ອນໄຫວຮ່ວມເປັນຕົ້ນ: ກອງກວດກາປ່າໄມ້, ກອງກວດກາພາສີ, ບໍ່ແຮ່, ຊັບສິນ ແລະ ອື່ນໆ. ມອບໃຫ້ຄະນະຮັບຜິດຊອບປະສານງານຊາຍແດນແຕ່ງຕັ້ງພະນັກງານໄກກວດກາຕິດຕາມ ແລະ ປະເມີນ ສົມທົບກັບພະແນກກວດກາລັດເປັນປະຈຳ.

3. ຫັນປ່ຽນຮູບການລົງຮາກຖານຂອງການນຳແລະຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ທີ່ລົງໄປຊີ້ນຳ ແລະ ຕິດຕາມສະພາບ ມາກຳນົດເປັນຈຸດສຸມບູລິມະສິດ ເພື່ອແກ້ໄຂຢູ່ແຕ່ລະເມືອງ, ໂດຍມອບໃຫ້ສະຫາຍ ຄະນະປະຈຳພັກແຂວງ, ເຈົ້າແຂວງ-ຮອງເຈົ້າແຂວງ ເປັນຫົວໜ້າຄະນະນຳພາພະແນກການ ແລະ ກົມກອງທີ່ກ່ຽວຂ້ອງລົງໄປແກ້ໄຂຈົນກວ່າສຳເລັດ. ມອບໃຫ້ຫ້ອງວ່າການແຂວງຄົ້ນຄວ້າສັງລວມບັນຫາຕ່າງໆທີ່ເກີດຫຼໍ່ແຫຼມຢູ່ແຕ່ລະເມືອງ ເພື່ອຈັດເປັນບູລິມະສິດແລະກະກຽມຫັນລົງໂລດ ນັບແຕ່ເດືອນ 4/2017 ເປັນຕົ້ນໄປ.

4. ເຫັນດີໃຫ້ພະແນກອຸດສາຫະກຳແລະການຄ້າ ສົມທົບກັບ ພະແນກກະສິກຳ ແລະປ່າໄມ້ ນຳເອົາບັນຊີໄມ້ທີ່ໄດ້ທ້ອນໂຮມແລ້ວ ເພື່ອມາສ້ອມແປງບັນດາຂົວທີ່ເປ່ເພຕາມເສັ້ນທາງ 18 A ໄປເມືອງສະໜາມໄຊ ແລະ ຕາມທາງແຕ່ສະໜາມໄຊໄປຫາປາກເຊປຽນ. ຫຼັງຈາກນັ້ນຈຶ່ງລາຍງານຄືນໃຫ້ລັດຖະບານ, ສ່ວນພະແນກ ຍທຂ ແຂວງ ພາຍຫຼັງໄດ້ໄມ້ແລ້ວໃຫ້ດຳເນີນການສ້ອມແປງໂດຍໄວ.

5. ເຫັນດີໃຫ້ກອງບັນຊາການ ປກສ ແຂວງ ສົມທົບກັບສານປະຊາຊົນແຂວງ ແລະ ໄອຍະການແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງດຳເນີນການແກ້ໄຂພາຫະນະທີ່ຍຶດໄດ້ໃຫ້ສາມາດນຳໃຊ້ໄດ້ຫຼືຂາຍເອົາເງິນເຂົ້າງົບປະມານ.

- ກອງບັນຊາການ ປກສ ແຂວງ ສົມທົບກັບພະແນກອຸດສາຫະກຳແລະການຄ້າແຂວງ ແກ້ໄຂບັນຫາການຂາຍປືນ ແລະ ສິ້ນສ່ວນປະກອບ, ເຄື່ອງຊ໋ອດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການທຳລາຍສິ່ງແວດລ້ອມ ແລະ ຊັບພະຍາກອນ.
- ດຳເນີນການອອກບັດປະຈຳຕົວ ແລະ ສຳມະໂນຄົວຢ່າງຕໍ່ເນື່ອງ ລວມທັງກວດກາຄືນ ເພື່ອຮັບປະກັນບໍ່ໃຫ້ປະຊາຊົນພົນລະເມືອງເປັນຄົນເຖື່ອນ ແລະ ທັງສາມາດນຳໃຊ້ເຂົ້າໃນວຽກງານອື່ນໆ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ເຊັ່ນ: ກອງທຶນສຸຂະພາບ, ການດຳເນີນຄະດີ, ການອອກໃບຕາດິນ ແລະ ອື່ນໆ.

6. ຮັບຮອງເອົາແຜນການເຄື່ອນໄຫວກິດຈະກຳປີໃໝ່ທີ່ເປັນການອະນຸລັກຮີດຮອງປະເພນີຂອງຊາດ ແລະ ຂອງທ້ອງຖິ່ນເຮົາ ແລະ ຫຼິ້ນບຸນປີໃໝ່ ໃຫ້ມີຄວາມເບີກບານມ່ວນຊື່ນ.

II. ວຽກສືບຕໍ່ ດັ່ງນີ້:

1. ວຽກງານການເງິນ:

- ສືບຕໍ່ສຳຫຼວດຖານລາຍຮັບໃຫ້ຊັດເຈນ.
- ສືບຕໍ່ເປັນເຈົ້າການສົມທົບກັບສານປະຊາຊົນແຂວງ, ໄອຍະການແຂວງ ກໍ່ຄືຜູ້ປະກອບການເລັ່ງທວງ ແລະ ແກ້ໄຂໜີ້ສິນ. (ທັງສອງບັນຫານີ້ ໃຫ້ລາຍງານໃນກອງປະຊຸມ 6 ເດືອນຕົ້ນປີ).

2. ສືບຕໍ່ປັບປຸງກົນໄກປະສານງານລະຫວ່າງພະແນກການ ອົງການປົກຄອງແຂວງ ແລະ ສານປະຊາຊົນແຂວງ ແລະ ອົງການໄອຍະການແຂວງ ໃຫ້ກົມກຽວກັບທິດຊີ້ນຳຂອງຄະນະປະຈຳພັກແຂວງ.

- ສຳລັບການແກ້ໄຂຄົນຂົ້ນໄປລັກຫີນຢູ່ພູກາງໂຮງຈະໄດ້ຮຽກປະຊຸມສະເພາະຕື່ມອີກ ເພື່ອຫາວິທີແກ້ໄຂ.

3. ມອບໃຫ້ຫ້ອງວ່າການແຂວງ ສືບຕໍ່ຄົ້ນຄວ້າບັນຫາແກ້ໄຂຫຼືຊ່ວຍເຫຼືອອຸປະຕິເຫດແລະຄົນທຸກຍາກ.

4. ບັນຫາໄມ້ໃຫ້ສືບຕໍ່ປະຕິບັດຕາມທິດຊີ້ນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ ຂຶ້ນບັນຊີໄມ້ ໃຫ້ເປັນເອກະພາບກັນ ເພື່ອຊຸ້ນຊ້ຽວປະມູນຂາຍ. ໃຫ້ກຳໄດ້ໄມ້ທັງໝົດທີ່ມີໃນແຕ່ລະສະໜາມ ແລ້ວຂໍທິດຊີ້ນຳຈາກເຈົ້າແຂວງ-ຮອງເຈົ້າແຂວງ ເພື່ອຕົກລົງເປັນແຕ່ລະກໍລະນີ.

ກອງປະຊຸມອົງການປົກຄອງແຂວງປະຈຳ ເດືອນ 3 ປີ 2017 ໄດ້ດຳເນີນມາຮອດເວລາ 11:45 ໂມງ ຂອງວັນທີ 5 ເດືອນ 4 ປີ 2017 ກອງປະຊຸມກໍ່ໄດ້ປິດລົງຢ່າງເປັນທາງການດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ເຈົ້າແຂວງ

ແຂວງອັດຕະປື

ເຈົ້າແຂວງແຂວງອັດຕະປື

ປອ ນາມ ວິຍະເກດ